ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງການຕ່າງປະເທດ
ຫ້ອງການ

ເລກທີ: 229 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 20 JAN 2025

# ຫນັງສືແຈ້ງເຊີນປະມູນ

**ເຖິງ:** ບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສອງໜອງ ການບໍລິການຈັດພິມ

**ເລື່ອງ:** ເຊີນເຂົ້າຮ່ວມແຂ່ງຂັນປະມູນເປີດກວ້າງ ສໍາລັບການສອງໜອງ ການບໍລິການກ່ຽວກັບການຈັດພິມຕ່າງໆ ໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2025.

ຫ້ອງການ ກະຊວງການຕ່າງປະເທດ ຂໍເຊີນບັນດາບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງການບໍລິການຈັດພິມ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນເພື່ອສະໜອງ ການບໍລິການກ່ຽວກັບການຈັດພິມຕ່າງໆ ໃຫ້ແກ່ ກະຊວງການຕ່າງປະເທດ ປະຈໍາປີ 2025, ເຊິ່ງມີລາຍລະອຽດ ດັ່ງນີ້:

1. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
2. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆ ບໍລິສັດ, ຫ້າງ/ຮ້ານ ຂອງນິຕິບຸກຄົນພາຍໃນທີ່ດໍາເນີນທຸລະກິດຢູ່ໃນນະຄອນຫຼວງວຽງຈັນ, ມີໃບທະບຽນວິສາຫະກິດ, ມີເລກປະຈໍາຕົວເສຍອາກອນ ແລະ ມີໃບຢັ້ງຢືນການປະຕິບັດພັນທະພາສີອາກອນ ຖືກຕ້ອງຕາມກົດໝາຍ.
3. ບໍລິສັດ, ຫ້າງ/ຮ້ານ ແລະ ຜູ້ປະກອບການກ່ຽວກັບການສະໜອງ ການບໍລິການຈັດພິມ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາເອກະສານປະມູນຄົບຊຸດໄດ້ ທີ່ ພະແນກບໍລິຫານ ຫ້ອງການ ກະຊວງການຕ່າງປະເທດ (ໂທລະສັບ 021 416572, 020 55611534, 020 55609706), ເຊິ່ງມີສໍານັກງານຕັ້ງຢູ່ຖະໜົນ 23 ສິງຫາ, ບ້ານໂພນໄຊ, ເມືອງໄຊເຊດຖາ, ນະຄອນຫຼວງວຽງຈັນ ໃນໂມງລັດຖະການ 8:00-11:00 ໂມງ ແລະ 13:00-16:00 ໂມງ , ເລີ່ມຂາຍຊອງປະມູນ ວັນທີ 22 ມັງກອນ 2025, ລາຄາຊອງປະມູນ 1,000,000 ກີບ (ໜຶ່ງລ້ານກີບ), ຈໍານວນເງິນດັ່ງກ່າວຈະບໍ່ໄດ້ສົ່ງຄືນ, ວິທີການຊໍາລະເງິນຕ້ອງຈ່າຍເປັນເງິນສົດ.
4. ກໍານົດສົ່ງຊອງປະມູນ ຕ້ອງໃຫ້ສົ່ງ ພະແນກບໍລິຫານ ຫ້ອງການ ກະຊວງການຕ່າງປະເທດ ກ່ອນເວລາ 16:00 ໂມງ ຂອງວັນທີ 10 ກຸມພາ 2025, ຖ້າຊອງປະມູນໃດສົ່ງຊ້າງກ່ອນກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງປະມູນ.

5. ກຳນົດເປີດຊອງປະມູນແມ່ນວັນທີ 12 ກຸມພາ 2025 ເວລາ 13:00 ໂມງ ທີ່ ຫ້ອງປະຊຸມຊັ້ນ 3 ຕຶກ B ຂອງ ກະຊວງການຕ່າງປະເທດ, ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ ນຳ.
6. ເອກະສານປະມູນ ຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ໜັງສືຄ້ຳປະກັນການປະມູນຈາກ ທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ.

ດັ່ງນັ້ນ, ຈຶ່ງເຊີນມາຍັງທ່ານຜູ້ທີ່ມີຄວາມສົນໃຈ ເຂົ້າຮ່ວມປະມູນ ຕາມວັນເວລາດັ່ງກ່າວດ້ວຍ.

**ຫົວໜ້າຫ້ອງການ**

ອອນຄຳ ເຈືອງມະນີວົງ